ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ...05.../ພນ

ນະຄອນຫຼວງວຽງຈັນ, ວັນທີ 11 ຕຸລາ 2017

**ຄຳແນະນຳ**

**ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍສະມາຄົມ**

ໂດຍປະຕິບັດຕາມມາດຕາ 80 ຂອງດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017, ກະຊວງພາຍໃນ ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ສະມາຄົມ ດັ່ງນີ້:

## I. ຈຸດປະສົງລະດັບຄາດໝາຍ

1. ເພື່ອຜັນຂະຫຍາຍ, ກຳນົດລະອຽດ, ຈະແຈ້ງຕື່ມເນື້ອໃນບາງມາດຕາຂອງດຳລັດ;
2. ເພື່ອເຮັດໃຫ້ອົງການອະນຸມັດສ້າງຕັ້ງ, ອົງການຈົດທະບຽນ ແລະ ສະມາຄົມໄດ້ຮັບຮູ້, ເຂົ້າໃຈ, ມີຄວາມເປັນເອກະພາບ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດດ້ວຍຄວາມຮັບຜິດຊອບສູງ, ເຮັດໃຫ້ການຄຸ້ມຄອງສະມາຄົມ ມີປະສິດທິພາບ ແລະ ທັນຕາມສະພາບການ.

## II. ເນື້ອໃນ

1. ຄວາມໝາຍຂອງຄຳສັບໃນຫຼັກການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ
   1) **ຫຼັກການເຄື່ອນໄຫວເປັນປະຈຳ** ໝາຍຄວາມວ່າ: ສະມາຄົມ ມີຜູ້ປະຈຳການຢູ່ຫ້ອງການໃນໂມງເວລາລັດຖະການ ເພື່ອເຮັດວຽກ ແລະ ພົວພັນປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ຮັບປະກັນການປະຕິບັດພາລະບົດບາດ-ໜ້າທີ່ຂອງສະມາຄົມ ຢ່າງເປັນປົກກະຕິ ບັນລຸຄາດໝາຍຕາມແຜນການປະຈຳປີ ແລະ ຈຸດປະສົງຂອງສະມາຄົມ.
   2) **ຫຼັກການຄຸ້ມຄອງ ແລະ ຮັບຜິດຊອບດ້ວຍຕົນເອງຕໍ່ໜ້າກົດໝາຍ** ໝາຍຄວາມວ່າ: ສະມາຊິກສະມາຄົມຕົກລົງກັນເອງກ່ຽວກັບຮູບແບບ ແລະ ວິທີການຄຸ້ມຄອງບໍລິຫານພາຍໃນສະມາຄົມ ໂດຍຜ່ານກົດລະບຽບຂອງຕົນ ແລະ ທຸກການເຄື່ອນໄຫວຂອງສະມາຄົມຈະແມ່ນຜົນສຳເລັດ ຫຼື ຂໍ້ຂາດຕົກບົກພ່ອງປະການໃດ ແມ່ນສະມາຄົມຮັບຜິດຊອບເອງຕໍ່ໜ້າກົດໝາຍ.
   3) **ຫຼັກການກຸ້ມຕົນເອງທາງດ້ານການເງິນ** ໝາຍຄວາມວ່າ: ແຕ່ລະປີສະມາຄົມເຮັດແນວໃດ ຈຶ່ງຈະມີງົບປະມານເພື່ອເຄື່ອນໄຫວ ແມ່ນຄວາມຮັບຜິດຊອບຂອງສະມາຄົມ. ແຫຼ່ງລາຍຮັບຕົ້ນຕໍຂອງສະມາຄົມແມ່ນໄດ້ມາຈາກການປະກອບສ່ວນຂອງສະມາຊິກ, ຈາກການບໍລິຈາກຂອງປະຊາຊົນ, ຈາກການອຸປະຖຳຂອງວິສາຫະກິດ ແລະ ອາດຈະໄດ້ມາຈາກການສະໜັບສະໜູນຈາກພາກລັດ ພາຍໃນ ແລະ ຕ່າງປະເທດ.
   4) **ຫຼັກການໂປ່ງໃສ, ເປີດເຜີຍ** ໝາຍຄວາມວ່າ: ທຸກການເຄື່ອນໄຫວ, ລາຍຮັບ-ລາຍຈ່າຍ ຂອງສະມາຄົມຕ້ອງຈະແຈ້ງ, ມີການລາຍງານ ແກ່ສະມາຊິກສະມາຄົມ, ປະຊາຊົນ ຫຼື ທຸກການຈັດຕັ້ງມີຄວາມສົນໃຈກໍ່ສາມາດເຂົ້າເຖິງ, ຊັກຖາມ ແລະ ກວດສອບໄດ້.



Scanned by CamScanner

5) **ຫຼັກການຄວາມສະເໝີພາບ** ໝາຍຄວາມວ່າ: ທຸກສະມາຄົມ, ສະມາຊິກຂອງສະມາຄົມ ມີສິດເທົ່າທຽມກັນ, ມີຄວາມສະເໝີພາບກັນ ຕໍ່ໜ້າກົດໝາຍ ແລະ ກົດລະບຽບຂອງສະມາຄົມ ໃນການປະກອບສ່ວນ ແລະ ໄດ້ຮັບຜົນປະໂຫຍດຈາກສະມາຄົມ ຕະຫຼອດຮອດການປະກອບຄໍາຄິດເຫັນຕ່າງໆໃນສະມາຄົມ.

## 2. ການປ່ຽນຊື່ ສະມາຄົມ

ການປ່ຽນຊື່ ແມ່ນປະຕິບັດຕາມຫຼັກການຕົ້ນຕໍສະໝັກໃຈ ຂອງສະມາຊິກສະມາຄົມ ແລະ ຕາມກົດລະບຽບ ຂອງສະມາຄົມກໍານົດ ແຕ່ຕ້ອງຮັບປະກັນຄວາມເປັນເອກະພາບພາຍໃນສະມາຄົມ ຫລັງຈາກຕົກລົງຢ່າງເປັນທາງການແລ້ວ ໃຫ້ສະມາຄົມ ລາຍງານ ແລະ ສະເໜີຫາອົງການອະນຸມັດສ້າງຕັ້ງ ເພື່ອຮັບຮອງເອົາພາຍໃນ ສິບຫ້າ (15) ວັນ. ເມື່ອອົງການອະນຸມັດໄດ້ຮັບເອກະສານສະເໜີແລ້ວ ຕ້ອງອອກຂໍ້ຕົກລົງຮັບຮອງ ຫຼື ບໍ່ຮັບຮອງເອົາການປ່ຽນຊື່ພາຍໃນ ສິບຫ້າ (15) ວັນ. ກໍລະນີມີການຮັບຮອງເອົາການປ່ຽນຊື່ ໃຫ້ສະມາຄົມ ລາຍງານມາຍັງກະຊວງພາຍໃນ ຊາບ ເພື່ອປ່ຽນຊື່ໃນປຶ້ມທະບຽນສະມາຄົມ. ຊື່ໃໝ່ຂອງສະມາຄົມໃຊ້ໄດ້ເມື່ອອົງການອະນຸມັດສ້າງຕັ້ງໄດ້ອອກຂໍ້ຕົກລົງຮັບຮອງເອົາຢ່າງເປັນທາງການເປັນຕົ້ນໄປ.

## 3. ການປ່ຽນແປງທີ່ຕັ້ງສໍານັກງານຂອງສະມາຄົມ

ສະມາຄົມ ທີ່ມີການປ່ຽນແປງ ຫຼື ຍົກຍ້າຍທີ່ຕັ້ງສໍານັກງານ, ຫ້ອງການສາຂາ ໄປຢູ່ບ່ອນໃໝ່ ລວມທັງການປ່ຽນແປງຂໍ້ມູນການຕິດຕໍ່ພົວພັນ ຕ້ອງແຈ້ງໃຫ້ອົງການອະນຸມັດສ້າງຕັ້ງຊາບ ພາຍໃນກໍານົດ ສາມສິບ (30) ວັນ.

## 4. ສະມາຄົມທີ່ມີລັກສະນະພິເສດ

ສະມາຄົມທີ່ມີລັກສະນະພິເສດ ໝາຍເຖິງສະມາຄົມທີ່ເຄື່ອນໄຫວໃນຂົງເຂດ, ຂະແໜງການ ຫຼື ວິຊາຊີບທີ່ສໍາຄັນຍິ່ງ, ມີລັກສະນະບູລິມະສິດ, ລັດຖະບານມີນະໂຍບາຍຍຸກຍູ້, ສົ່ງເສີມເຊັ່ນ: ໃນຂົງເຂດຄົ້ນຄ້ວາວິທະຍາສາດ-ເຕັກໂນໂລຊີ, ສຶກສາ, ສາທາລະນະສຸກ, ສິ່ງແວດລ້ອມ, ແກ້ໄຂຄວາມທຸກຍາກ. ໃນການສະເໜີຂໍອະນຸມັດສ້າງຕັ້ງສະມາຄົມຂົງເຂດເຫລົ່ານີ້ ຈໍານວນສະມາຊິກສະມາຄົມສະໝັກໃຈເຂົ້າຮ່ວມອາດບໍ່ຈໍາເປັນຕ້ອງມີຈໍານວນຄົບຖ້ວນຕາມທີ່ກໍານົດກໍໄດ້.

## 5. ເງື່ອນໄຂສະເພາະໃນການສ້າງຕັ້ງສະມາຄົມເສດຖະກິດ

ນອກຈາກເງື່ອນໄຂການສ້າງຕັ້ງສະມາຄົມ ທີ່ກໍານົດໃນມາດຕາ 7 ຂອງດໍາລັດສະບັບ 238/ນຍ ແລ້ວ, ການສ້າງຕັ້ງສະມາຄົມເສດຖະກິດ ຕ້ອງປະຕິບັດຕາມລະບຽບການ ແລະ ເງື່ອນໄຂສະເພາະຕື່ມ ດັ່ງນີ້:

1. ສົ່ງເສີມການປະກອບທຸລະກິດຕາມທີ່ໄດ້ກໍານົດໄວ້ໃນຈຸດປະສົງຂອງສະມາຄົມ;
2. ສົ່ງເສີມຄຸນນະພາບຂອງສິນຄ້າທີ່ຜະລິດ ຫຼື ຈໍາໜ່າຍໃຫ້ໄດ້ມາດຕະຖານ ຕະຫຼອດເຖິງການຄົ້ນຄວ້າວິໄຈ ແລະ ປັບປຸງວິທີການຜະລິດ ແລະ ການຄ້າໃຫ້ໄດ້ຜົນດີຍິ່ງຂຶ້ນ;
3. ສົ່ງເສີມການຜະລິດເພື່ອໃຫ້ມີສິນຄ້າພຽງພໍຕາມຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ;
4. ຊ່ວຍເຫຼືອສະມາຊິກແກ້ໄຂອຸປະສັກ ລວມທັງເຈລະຈາກັບພາຍນອກ ເພື່ອຜົນປະໂຫຍດຮ່ວມກັນໃນການດໍາເນີນທຸລະກິດຕາມທີ່ໄດ້ກໍານົດໄວ້ໃນຈຸດປະສົງຂອງສະມາຄົມ;
5. ດໍາເນີນການໄກ່ເກ່ຍຂໍ້ຂັດແຍ່ງ ທາງດ້ານທຸລະກິດລະຫວ່າງສະມາຊິກດ້ວຍກັນ ກໍຄືກັບພາຍນອກ;
6. ຮ່ວມມືກັບພາກລັດໃນການສົ່ງເສີມພັດທະນາທຸລະກິດ.



Scanned by CamScanner

**6. ສະມາຄົມທີ່ເຄື່ອນໄຫວກວມເອົາສອງຂະແໜງການຂຶ້ນໄປ**

ໝາຍເຖິງ ສະມາຄົມທີ່ມີຈຸດປະສົງການເຄື່ອນໄຫວພົວພັນກັບຫຼາຍຂະແໜງການ ຊຶ່ງບໍ່ຂຶ້ນກັບຄວາມຮັບຜິດຊອບຄຸ້ມຄອງສະເພາະຂອງກະຊວງໃດໜຶ່ງ ຫຼື ສະມາຄົມ ທີ່ມີຈຸດປະສົງເຄື່ອນໄຫວປະສົມປະສານທັງໃນຂົງເຂດເສດຖະກິດ, ວິຊາຊີບ, ສັງຄົມສົງເຄາະ ແລະ ການພັດທະນາ ຕົວຢ່າງ: ສະມາຄົມພັດທະນາຊຸມຊົນ, ສະມາຄົມອະນຸລັກສິ່ງແວດລ້ອມ ແລະ ຊຸມຊົນ, ສະມາຄົມຊາວນາ ແລະ ອະນຸລັກວັດທະນະທຳ ແລະ ອື່ນໆ.

**7. ການພິຈາລະນາຮັບຮອງເອົາການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ**

ພາຍຫຼັງລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ໄດ້ຮັບໜັງສືສະເໜີຂອງຜູ້ລິເລີ່ມສ້າງຕັ້ງສະມາຄົມ ກ່ຽວກັບການຂໍຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມແລ້ວ, ຕ້ອງສົ່ງເອກະສານທັງໝົດໄປກວດກາ ແລະ ຢັ້ງຢືນປະຫວັດຂອງຄະນະຂົນຂວາຍສ້າງຕັ້ງສະມາຄົມ ນຳກະຊວງປ້ອງກັນຄວາມສະຫງົບ ພາຍໃນ ເຈັດ (07) ວັນ. ກະຊວງປ້ອງກັນຄວາມສະຫງົບ ຕ້ອງກວດກາປະຫວັດ ແລະ ແຈ້ງຕອບຫາພາກສ່ວນກ່ຽວຂ້ອງ ພາຍໃນ ສີ່ສິບຫ້າ (45) ວັນ. ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຕ້ອງແຈ້ງຕອບການຮັບຮອງ ຫຼື ບໍ່ຮັບຮອງ ການແຕ່ງຕັ້ງຄະນະຂົນຂວາຍ ພາຍໃນກຳນົດ ແປດ (08) ວັນ ພາຍຫຼັງໄດ້ຮັບແຈ້ງຕອບ ຈາກກະຊວງປ້ອງກັນຄວາມສະຫງົບ. ກໍລະນີບໍ່ສາມາດຮັບຮອງເອົາທັງໝົດຄະນະ ຫຼື ຜູ້ໃດຜູ້ໜຶ່ງໃນຄະນະຂົນຂວາຍ ກະຊວງ, ອົງການລັດທຽບເທົ່າກະຊວງຕ້ອງອະທິບາຍເຫດຜົນເປັນລາຍລັກອັກສອນໃຫ້ຜູ້ລິເລີ່ມສ້າງຕັ້ງສະມາຄົມຊາບ.

ໜ້າທີ່ຕົ້ນຕໍ ຂອງຄະນະຂົນຂວາຍສ້າງຕັ້ງສະມາຄົມ ມີດັ່ງນີ້:

1) ຂົນຂວາຍສະມາຊິກສະມາຄົມ, ກໍລະນີມີຄວາມຈຳເປັນຈັດຕັ້ງໂຄສະນາຂົນຂວາຍ ດ້ວຍຮູບແບບກອງປະຊຸມທີ່ມີຫຼາຍຄົນເຂົ້າຮ່ວມ ຕ້ອງເຮັດໜັງສືຂໍອະນຸມັດຈາກອົງການປົກຄອງແຂວງ ຫຼື ນະຄອນຫຼວງ; ໃນໜັງສືສະເໜີ ໃຫ້ບົ່ງບອກແຈ້ງກ່ຽວກັບ ຈຸດປະສົງ, ເນື້ອໃນ, ຂັ້ນຕອນໃນການຂົນຂວາຍ ແລະ ຕ້ອງຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2) ຮ່າງກົດລະບຽບຂອງສະມາຄົມ;
3) ຮ່າງໜັງສືສະເໜີຂໍເປີດກອງປະຊຸມສ້າງຕັ້ງສະມາຄົມ;
4) ຮ່າງແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານຂອງສະມາຄົມ;
5) ສັງລວມລາຍຊື່ ແລະ ຕື່ມຟອມບັນຊີລາຍຊື່ສະມາຊິກໃຫ້ຄົບຖ້ວນຕາມເງື່ອນໄຂການສ້າງຕັ້ງສະມາຄົມ;
6) ສະເໜີຂໍອະນຸມັດເປີດກອງປະຊຸມສ້າງຕັ້ງສະມາຄົມ;
7) ດຳເນີນກອງປະຊຸມສ້າງຕັ້ງສະມາຄົມ.

**8. ກໍລະນີໝົດກຳນົດເວລາໃນການຂໍເລື່ອນການເປີດກອງປະຊຸມສ້າງຕັ້ງສະມາຄົມ**

ອົງການທີ່ມີສິດອະນຸມັດສ້າງຕັ້ງ ພິຈາລະນາອະນຸມັດເລື່ອນເວລາເປີດກອງປະຊຸມສ້າງຕັ້ງສະມາຄົມ ໄດ້ພຽງຄັ້ງດຽວ ແລະ ກຳນົດເວລາເລື່ອນສູງສຸດບໍ່ເກີນ ຫົກສິບ (60) ວັນ. ກໍລະນີໝົດກຳນົດເວລາດັ່ງກ່າວແລ້ວ ແຕ່ຄະນະຂົນຂວາຍສ້າງຕັ້ງສະມາຄົມ ຍັງບໍ່ສາມາດເປີດກອງປະຊຸມສ້າງຕັ້ງສະມາຄົມຂຶ້ນໄດ້ ຖືວ່າຂໍ້ຕົກລົງຮັບຮອງການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ ແລະ ການສະເໜີສ້າງຕັ້ງສະມາຄົມຄັ້ງນີ້ ເປັນໂມຄະ ຫຼື ບໍ່ສາມາດສ້າງຕັ້ງຂຶ້ນໄດ້. ອົງການທີ່ມີສິດອະນຸມັດສ້າງຕັ້ງ ຕ້ອງລຶບຊື່ສະມາຄົມອອກຈາກບັນຊີ.

**9. ການພິຈາລະນາຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານຂອງສະມາຄົມ (ມາດຕາ 26)**



Scanned by CamScanner

**9.1 ການພິຈາລະນາຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານຂອງສະມາຄົມ ຈາກກອງປະຊຸມສ້າງຕັ້ງສະມາຄົມ**

ອົງການທີ່ມີສິດອະນຸມັດສ້າງຕັ້ງ ພິຈາລະນາຮັບຮອງ ຫຼື ປະຕິເສດ ການຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານສະມາຄົມ ແມ່ນບົນພື້ນຖານ ບົດລາຍງານຜົນກອງປະຊຸມສ້າງຕັ້ງ, ຄໍາເຫັນຂອງກະຊວງ, ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ (ກໍລະນີມີການປັບປຸງກົດລະບຽບ), ຜົນການກວດກາປະຫວັດ ຂອງຄະນະບໍລິຫານ ສະມາຄົມ.

ກໍລະນີປະຕິເສດການຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານຂອງສະມາຄົມ ອົງການທີ່ມີສິດອະນຸມັດສ້າງຕັ້ງ ຈະຕ້ອງແຈ້ງໃຫ້ສະມາຄົມຊາບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນທີ່ບໍ່ສາມາດຮັບຮອງການສ້າງຕັ້ງສະມາຄົມໄດ້.

**9.2 ການພິຈາລະນາຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານຂອງສະມາຄົມ ຈາກກອງປະຊຸມໃຫຍ່**

ຂັ້ນຕອນ ແລະ ກໍານົດເວລາໃນການຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານ ແມ່ນປະຕິບັດຄືກັນກັບການຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານ ໃນກອງປະຊຸມສ້າງຕັ້ງສະມາຄົມ.

ການປະກອບເອກະສານຂໍຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານສະມາຄົມ ແມ່ນປະຕິບັດຕາມ ມາດຕາ 19 ຂອງດໍາລັດ. ສໍາລັບມະຕິກອງປະຊຸມສ້າງຕັ້ງສະມາຄົມ ແມ່ນປ່ຽນເປັນມະຕິຂອງກອງປະຊຸມໃຫຍ່.

**10.ການຮັບເອົາສະມາຊິກສະໜັບສະໜູນ ແລະ ສະມາຊິກກິດຕິມະສັກ**

ສໍາລັບສະມາຄົມທີ່ມີລັກສະນະເສດຖະກິດ ອະນຸຍາດໃຫ້ຮັບເອົາສະມາຊິກສະໜັບສະໜູນ ແລະ ສະມາຊິກກິດຕິມະສັກ ທີ່ເປັນວິສາຫະກິດຂອງຕ່າງປະເທດ ຫຼື ວິສາຫະກິດຫຸ້ນສ່ວນ ກັບຕ່າງປະເທດໄດ້.

ວິທີການຮັບເອົາ ຫຼື ພັນທະຂອງສະມາຊິກສະໜັບສະໜູນ ແລະ ສະມາຊິກກິດຕິມະສັກ ແມ່ນໃຫ້ປະຕິບັດຕາມກົດລະບຽບຂອງສະມາຄົມ.

**11. ກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ສາມັນ ຫຼື ວິສາມັນ ຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອໄດ້ຮັບອະນຸຍາດ ຢ່າງເປັນລາຍລັກອັກສອນ ຈາກອົງການອະນຸມັດສ້າງຕັ້ງ, ເມື່ອໄດ້ຮັບອະນຸຍາດແລ້ວ, ກໍລະນີກອງປະຊຸມໃຫຍ່ຈະມີການເລືອກຕັ້ງ ຄະນະບໍລິຫານສະມາຄົມໃໝ່ ສະມາຄົມຕ້ອງສົ່ງປະຫວັດຂອງເປົ້າໝາຍຜູ້ລົງສະໝັກເລືອກຕັ້ງເປັນຄະນະບໍລິຫານ ມາຍັງອົງການອະນຸມັດສ້າງຕັ້ງລ່ວງໜ້າ ສາມສິບ (30) ວັນ ກ່ອນສະມາຄົມຈະເປີດກອງປະຊຸມໃຫຍ່ ເພື່ອສົ່ງໃຫ້ ກະຊວງປ້ອງກັນຄວາມສະຫງົບ ກວດກາເສຍກ່ອນ. ເມື່ອຄົບເງື່ອນໄຂ ແລະ ມີຄວາມເໝາະສົມແລ້ວ, ອົງການອະນຸມັດສ້າງຕັ້ງ ຈະອອກຂໍ້ຕົກລົງອະນຸຍາດໃຫ້ເປີດກອງປະຊຸມໃຫຍ່ສະມາຄົມຂຶ້ນ. ຂໍ້ຕົກລົງດັ່ງກ່າວຈະມີຜົນສັກສິດ ພາຍໃນກໍານົດເວລາ ຫົກສິບ (60) ວັນ.

ກໍລະນີ ຄົບຕາມກໍານົດເວລາເປີດກອງປະຊຸມໃຫຍ່ ຕາມທີ່ໄດ້ກໍານົດໃນກົດລະບຽບຂອງສະມາຄົມແລ້ວ ແຕ່ສະມາຄົມ ບໍ່ສາມາດເປີດກອງປະຊຸມໃຫຍ່ໄດ້ ຕ້ອງເຮັດໜັງສືສະເໜີ ຂໍເລື່ອນການເປີດກອງປະຊຸມ ຈາກອົງການອະນຸມັດສ້າງຕັ້ງ ເພື່ອຂໍເລື່ອນ ກ່ອນຄົບກໍານົດເວລາ ສາມສິບ (30) ວັນ. ອົງການອະນຸມັດສ້າງຕັ້ງ ພິຈາລະນາເລື່ອນກອງປະຊຸມໃຫຍ່ໃຫ້ສະມາຄົມ ໄດ້ພຽງຄັ້ງດຽວ ແລະ ກໍານົດເວລາເລື່ອນສູງສຸດບໍ່ເກີນ ເກົ້າສິບ (90) ວັນ. ກໍລະນີໝົດກໍານົດເວລາດັ່ງກ່າວແລ້ວ ແຕ່ສະມາຄົມ ຍັງບໍ່ສາມາດເປີດກອງ



Scanned by CamScanner

ປະຊຸມໃຫຍ່ໄດ້ ສະມາຄົມຈະຖືກຍຸບເລີກໂດຍກະຊວງ, ອົງການລັດທຽບເທົ່າກະຊວງທີ່ອະນຸມັດສ້າງຕັ້ງ ແລະ ລຶບຊື່ອອກຈາກບັນຊີທະບຽນສະມາຄົມໂດຍກະຊວງພາຍໃນ.

ຮູບແບບການລົງຄະແນນສຽງ ແມ່ນສາມາດລົງຄະແນນສຽງໄດ້ທັງເປີດເຜີຍ ຫຼື ປິດລັບ ຕາມມະຕິຂອງກອງປະຊຸມ ຫຼື ລະບຽບຂອງສະມາຄົມກຳນົດ.

12. ການສ້າງຕັ້ງຫ້ອງການສາຂາຂອງສະມາຄົມຢູ່ທ້ອງຖິ່ນ

ການສ້າງຕັ້ງຫ້ອງການສາຂາຂອງສະມາຄົມ ມີ 02 ຂັ້ນຕອນຄື:

1. ການຂໍຄຳເຫັນຈາກເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ບ່ອນທີ່ ຫ້ອງການສາຂາຈະຕັ້ງຢູ່;
2. ການຂໍອະນຸມັດຈາກອົງການອະນຸມັດສ້າງຕັ້ງ.

**1. ການຂໍຄຳເຫັນຈາກເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ**

ຄະນະບໍລິຫານສະມາຄົມ ປະກອບເອກະສານຄົບຖ້ວນ ເພື່ອສະເໜີຕໍ່ ເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາ ດັ່ງລຸ່ມນີ້:

1) ໜັງສືສະເໜີ;
2) ສຳເນົາຂໍ້ຕົກລົງຮັບຮອງກົດລະບຽບ;
3) ສຳເນົາຂໍ້ຕົກລົງຮັບຮອງຄະນະບໍລິຫານ;
4) ສຳເນົາໃບທະບຽນສະມາຄົມ;
5) ສຳເນົາກົດລະບຽບສະມາຄົມ;
6) ໃບຢັ້ງຢືນທີ່ຕັ້ງຫ້ອງການສາຂາ ທີ່ໄດ້ຮັບການຢັ້ງຢືນຈາກອຳນາດການປົກຄອງບ້ານ ແລະ ແຜນທີ່ໂດຍສັງເຂບ.

ພາຍຫຼັງ, ເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ໄດ້ຮັບເອກະສານຄົບຖ້ວນແລ້ວ ໃຫ້ພິຈາລະນາເຫັນດີ ຫລື ບໍ່ເຫັນດີ ຕໍ່ການສະເໜີສ້າງຕັ້ງຫ້ອງການສາຂາຂອງສະມາຄົມ ເປັນລາຍລັກອັກສອນພາຍໃນກຳນົດ ສາມສິບ (30) ວັນ.

**2. ການຂໍອະນຸມັດຈາກອົງການອະນຸມັດສ້າງຕັ້ງ**

ພາຍຫຼັງໄດ້ຮັບຄຳເຫັນດີຈາກເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງແລ້ວ, ໃຫ້ຄະນະບໍລິຫານສະມາຄົມ ຍື່ນໜັງສືສະເໜີຂໍສ້າງຕັ້ງຫ້ອງການສາຂາມາຍັງອົງການອະນຸມັດສ້າງຕັ້ງເພື່ອພິຈາລະນາອະນຸມັດ.

ອົງການອະນຸມັດສ້າງຕັ້ງ ໄດ້ຮັບເອກະສານຄົບຖ້ວນແລ້ວໃຫ້ພິຈາລະນາຮັບຮອງ ຫຼື ປະຕິເສດ ເປັນລາຍລັກອັກສອນພາຍໃນ ສິບຫ້າ (15) ວັນ.

**13. ໜ້າທີ່ສະເພາະຂອງກະຊວງພາຍໃນ ກ່ຽວກັບສະມາຄົມ**

ນອກຈາກທີ່ໄດ້ກຳນົດໃນ ມາດຕາ 61 ຂອງດຳລັດແລ້ວຍັງມີໜ້າທີ່ຮັບຜິດຊອບອື່ນໆອີກ ດັ່ງນີ້:

1) ແນະນຳ, ຝຶກອົບຮົມ, ບຳລຸງຍົກລະດັບດ້ານວຽກງານສະມາຄົມ ໃຫ້ແກ່ພະນັກງານລັດຖະກອນຜູ້ທີ່ຮັບຜິດຊອບວຽກງານດັ່ງກ່າວ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ;
2) ສ້າງແບບຟອມຕ່າງໆ ແລະ ຄູ່ມືນຳໃຊ້ເຂົ້າໃນການຄຸ້ມຄອງສະມາຄົມ;
3) ຕິດຕາມ ແລະ ຊຸກຍູ້ ການສ້າງຕັ້ງສະມາຄົມ ທຸກປະເພດ ໃຫ້ດຳເນີນຖືກຕ້ອງຕາມລະບຽບການກຳນົດ.



Scanned by CamScanner

## 14. ຮູບການລະເມີດ ແລະ ມາດຕະການຕໍ່ຜູ້ລະເມີດ

ອົງການອະນຸມັດສ້າງຕັ້ງເປັນເຈົ້າການ ຫຼື ສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພິຈາລະນາ ແລະ ປະຕິບັດມາດຕະການ ຕໍ່ທຸກປະກົດການລະເມີດຂອງສະມາຄົມ.

ຮູບການລະເມີດ ແລະ ມາດຕະການຕໍ່ຜູ້ລະເມີດມີ ດັ່ງນີ້ :

1) ສະມາຄົມ ທີ່ມີການປ່ຽນແປງ ຫຼື ຍົກຍ້າຍທີ່ຕັ້ງສຳນັກງານ, ຫ້ອງການສາຂາ ໄປຢູ່ບ່ອນໃໝ່ ລວມທັງການປ່ຽນແປງຂໍ້ມູນການຕິດຕໍ່ພົວພັນ ແຕ່ບໍ່ແຈ້ງໃຫ້ອົງການທີ່ກ່ຽວຂ້ອງຊາບຕາມກຳນົດເວລາ.
2) ໃຊ້ຈ່າຍເງິນບໍລິຫານເກີນ 25 ສ່ວນຮ້ອຍ ຂອງແຜນລາຍຈ່າຍປະຈຳປີ.
3) ໃຊ້ຈ່າຍເງິນຊ່ວຍເຫຼືອ, ເງິນບຳລຸງສະມາຄົມ, ເງິນບໍລິຈາກທີ່ປຸກລະດົມ ຂົນຂວາຍມາໄດ້ ໂດຍບໍ່ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.
4) ເຄື່ອນໄຫວເກີນຂອບເຂດ ແລະ ຂົງເຂດ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ ພາໃຫ້ມີຄວາມເສຍຫາຍແກ່ສັງຄົມ.
5) ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງດຳລັດວ່າດ້ວຍສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ.

ອີງໃສ່ສະຖານໜັກ ຫຼື ເບົາ ຂອງການລະເມີດ ຈະພິຈາລະນາ ມາດຕະການທີ່ເໝາະສົມຄື: ການລະເມີດຄັ້ງທີ I ຈະຖືກກ່າວເຕືອນສຶກສາອົບຮົມ, ຄັ້ງທີ IIຈະຖືກສັ່ງໂຈະການເຄື່ອນໄຫວຊົ່ວຄາວ. ກໍລະນີສືບຕໍ່ລະເມີດຈະຖືກສັ່ງໃຫ້ຍຸບເລີກ. ການລະເມີດທີ່ກໍ່ໃຫ້ເກີດມີຜົນເສຍຫາຍໃຫຍ່ຫຼວງຮ້າຍແຮງຕໍ່ສັງຄົມ ແລະ ປະເທດຊາດ, ນອກຈາກສະມາຄົມຈະຖືກສັ່ງໃຫ້ຍຸບເລີກ ຍັງຈະຖືກດຳເນີນຄະດີຕາມລະບຽບກົດໝາຍຕື່ມອີກ.

ສະມາຄົມ ທີ່ຖືກສັ່ງໂຈະ ຫຼື ຢຸດຕິການເຄື່ອນໄຫວຊົ່ວຄາວ ອົງການທີ່ມີສິດອະນຸມັດສ້າງຕັ້ງ ຈະໄດ້ຖອນຂໍ້ຕົກລົງຮັບຮອງກົດລະບຽບ, ຂໍ້ຕົກລົງຮັບຮອງຄະນະບໍລິຫານ, ໃບທະບຽນສະມາຄົມ ແລະ ຕາປະທັບ ພ້ອມທັງທະບຽນນຳໃຊ້ຕາປະທັບ ຂອງສະມາຄົມ ຈົນກວ່າສະມາຄົມມີການປ່ຽນແປງ ແລະ ແກ້ໄຂໃຫ້ຖືກຕ້ອງສາກ່ອນແລ້ວຈຶ່ງສົ່ງຄືນໃຫ້.

## III. ການຈັດຕັ້ງປະຕິບັດ

1) ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສັງຄົມພາຍໃນປະເທດ ຈົ່ງຮັບຮູ້ ແລະ ປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ;
2) ການປະຕິບັດຕົວຈິງຖ້າຫາກເຫັນວ່າ ພົບຄວາມຫຍຸ້ງຍາກ, ເນື້ອໃນຈຸດໃດບໍ່ທັນຈະແຈ້ງ, ບໍ່ທັນຄົບຖ້ວນ ຫຼື ເຫັນວ່າບໍ່ຈຳເປັນ ໃຫ້ສະເໜີມາຍັງ ກະຊວງພາຍໃນ ເພື່ອພິຈາລະນາ;
3) ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ

ຄຳເພັ່ນ ສູນວິເລີດ



Scanned by CamScanner